ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທະນາຄານກາງລາວ - ສ. ເກົາຫຼີ

## "ສຶກສາຄົ້ນຄວ້າພາຍໃຕ້ໂຄງການແລກປ່ຽນຄວາມຮູ້ທາງວິຊາການ"




ໃນວັນທີ 26 ມິຖຸນາ 2019 ທີ່ໂຮງແຮມລາວພລາຊາ, ນະຄອນຫຼວງວຽງຈັນ ໄດ້ມີການຈັດຕັ້ງການສຳມະນາເບື້ອງຕົ້ນ ເພື່ອເຜີຍແຜ່ວຽກງານການພັດທະນາຕະຫຼາດເງິນ ຊຶ່ງນອນຢູ່ໃນໂຄງການແລກປ່ຽນຄວາມຮູ້ທາງດ້ານວິຊາການ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງ ສ. ເກົາຫຼີ ປະຈຳປີ 2019 ໂດຍການເຂົ້າຮ່ວມຂອງ ທ່ານນາງ ຟອງຈິນດາ ແສງສຸລິວົງ, ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ຄີ ຊຸນ ຈາງ, ຮອງຫົວໜ້າກົມຮ່ວມມືສາກົນ, ທະນາຄານກາງ ສ.ເກົາຫຼີ ແລະ ກໍ່ມີຜູ້ຕາງໜ້າທັງສອງທະນາຄານກາງເຂົ້າຮ່ວມ.

ການຈັດສຳມະນາທາງດ້ານວິຊາການຮ່ວມກັນໃນຄັ້ງນີ້, ກໍ່ເປັນຄັ້ງທີຫ້າໂດຍເລີ່ມຕົ້ນນັບຕັ້ງແຕ່ປີ 2015 ໂດຍທະນາຄານແຫ່ງ ສປປ ລາວ ໄດ້ຮັບການຊ່ວຍເຫຼືອໃນໂຄງການແລກປ່ຽນຄວາມຮູ້ທາງດ້ານວິຊາການຈາກ ທະນາຄານກາງ ສ. ເກົາຫຼີ ຢ່າງຕໍ່ເນື່ອງໃນແຕ່ລະປີ. ຜ່ານການຈັດຕັ້ງປະຕິບັດໂຄງການດັ່ງກ່າວເຫັນວ່າ ໄດ້ຮັບໝາກຜົນດີ ແລະ ມີຜົນປະໂຫຍດຫຼາຍຕໍ່ ທະນາຄານແຫ່ງ ສປປ ລາວ ໂດຍສະເພາະການສ້າງຄວາມອາດສາມາດໃຫ້ແກ່ພະນັກງານຂອງ ທະນາຄານແຫ່ງ ສປປ ລາວ ຊຶ່ງສະແດງອອກຄື: ພະນັກງານຈຳນວນໜຶ່ງໄດ້ປະກອບສ່ວນໃນການຄົ້ນຄວ້າວຽກງານວິຊາການ ແລະ ໄດ້ຂຽນບົດຄົ້ນຄວ້າແລກປ່ຽນກັບສາດສະດາຈານ ຈາກມະຫາວິທະຍາໄລທີ່ມີຊື່ສຽງຂອງ ສ.ເກົາຫຼີ ແລະ ໄດ້ມີການຈັດສຳມະນາແລກປ່ຽນ ຢູ່ ສປປ ລາວ ແລະ ຢູ່ ສ.ເກົາຫຼີ ຫຼາຍຄັ້ງ.

ໂດຍເຫັນໄດ້ເຖິງໝາກຜົນຂອງການປະຕິບັດໂຄງການດັ່ງກ່າວ ທະນາຄານກາງ ສ.ເກົາຫຼີ ກໍ່ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອແກ່ທະນາຄານແຫ່ງ ສປປ ລາວ ໃນສົກປີ 2019 ໃນໂຄງການແລກປ່ຽນທາງດ້ານວິຊາການພາຍໃຕ້ ຫົວຂໍ້ "**ການພັດທະນາຕະຫຼາດເງິນໃນ ສປປ ລາວ**" ເຊິ່ງຮູບແບບການຈັດຕັ້ງປະຕິບັດກໍ່ຄ້າຍຄືກັບໂຄງການຂອງປີທີ່ຜ່ານມາຄື ການຈັດສຳມະນາແລກປ່ຽນຄວາມຮູ້ ແລະ ການປະກອບສ່ວນຂຽນບົດຄົ້ນຄວ້າຮ່ວມກັນ ແລະ ໂຄງການດັ່ງກ່າວນີ້ເປັນຂີດໝາຍສຳຄັນໃນການເສີມສ້າງມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປ ລາວ ແລະ ສ.ເກົາຫຼີ ນອກຈາກຈະເປັນການແລກປ່ຽນທາງດ້ານວິຊາການຂອງສອງທະນາຄານກາງແລ້ວຍັງສາມາດນຳເອົາບົດຮຽນມາໝູນໃຊ້ໃນການປັບປຸງຕະຫຼາດເງິນຂອງ ທະນາຄານແຫ່ງ ສປປ ລາວ ໃນອະນາຄົດ.

**#ຂ່າວ-ພາບ: ສົມພົດ ທຳມະວົງ.**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ